ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການນຳ ທຫລ-ສະຫວັນນະເຂດ ພົບປະຫາລືວຽກງານ





ໃນວັນທີ 15 ທັນວາ 2020; ທ່ານ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມຄະນະ ໄດ້ເຂົ້າຢ້ຽມຂ່ຳນັບ ແລະ ປຶກສາຫາລືວຽກງານ ກັບທ່ານ ສັນຕິພາບ ພົມວິຫານ ກຳມະການສູນກາງພັກ, ເລຂາຄະນະພັກ, ເຈົ້າແຂວງສະຫວັນນະເຂດ ທີ່ຫ້ອງວ່າການປົກຄອງແຂວງດັ່ງກ່າວ; ພ້ອມນັ້ນ, ຍັງໄດ້ເຄື່ອນໄຫວເຮັດວຽກຢູ່ເຂດເສດຖະກິດພິເສດສະຫວັນນະເຂດ ແລະ ຍັງໄດ້ໂອ້ລົມ, ພະນັກງານ ທຫລ ພາກກາງ ແຂວງສະຫວັນນະເຂດ-ບັນດາທະນາຄານທຸລະກິດ ຊຶ່ງໄດ້ມີການຕ້ອນຮັບຢ່າງອົບອຸ່ນຈາກພາກສ່ວນດັ່ງກ່າວ.

ສຳລັບການເຂົ້າຢ້ຽມຂ່ຳນັບທ່ານເຈົ້າແຂວງສະຫວັນນະເຂດ, ທ່ານຜູ້ວ່າການ ທຫລ ຍັງແຈ້ງສະພາບການມາເຄື່ອນໄຫວເຮັດວຽກຢູ່ແຂວງສະຫວັນນະເຂດ, ພ້ອມນັ້ນ ຍັງໄດ້ປຶກສາຫາລືວຽກງານຕ່າງໆ ທີ່ປິ່ນອ້ອມວຽກງານຂອງຂະແໜງການທະນາຄານ ແລະ ສະຖາບັນການເງິນຈຸລະພາກຢູ່ແຂວງສະຫວັນນະເຂດ ໂດຍລວມແມ່ນດີ ສາມາດດຳເນີນທຸລະກຳການເງິນດ້ວຍບັນຍາກາດທີ່ດີ, ຕັ້ງໜ້າ ຊຶ່ງນຳໃຊ້ແຫຼ່ງທຶນທະນາຄານ ແລະ ສະຖາບັນການເງິນຈຸລະພາກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ເຮັດໃຫ້ຊາວແຂວງສະຫວັນນະເຂດ ມີຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເປັນກ້າວໆ. ທາງດ້ານທ່ານເຈົ້າແຂວງສະຫວັນນະເຂດ ກໍ່ໄດ້ຕີລາຄາສູງຕໍ່ບົດບາດຂອງທະນາຄານໃນການສະໜອງສິນເຊື່ອໃຫ້ແກ່ປະຊາຊົນບັນດາເຜົ່າຊາວແຂວງສະຫວັນນະເຂດ ໃນນີ້ໄດ້ສະໜອງສິນເຊື່ອໃຫ້ຜູ້ປະກອບການໄດ້ມີທຶນຮອນເຂົ້າໃນການຜະລິດ, ທຸລະກິດ ແລະ ການບໍລິການ ຕາມແນວທາງຂອງພັກ ແລະ ລັດຖະບານ; ຄຽງຄູ່ກັນນັ້ນ, ກໍ່ໄດ້ສະເໜີໃຫ້ຂະແໜງການທະນາຄານ ສືບຕໍ່ປັບປຸງໜ່ວຍບໍລິການຢູ່ບາງທ້ອງຖິ່ນໃຫ້ກ້ວາງຂວາງ ແລະ ທົ່ວເຖິງ.

ສະເພາະຢູ່ເຂດເສດຖະກິດພິເສດສະຫວັນນະເຂດ, ທ່ານຜູ້ວ່າການ ທຫລ ຍັງໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຢູ່ເຂດດັ່ງກ່າວຈາກທ່ານ ທອງໃສ ໄຊຍະວົງຄຳດີ ກຳມະການພັກແຂວງ, ຫົວໜ້າເຂດເສດຖະກິດພິເສດສະຫວັນນະເຂດ ທີ່ມີພາລະບົດບາດສຳຄັນໃນຂົງເຂດເສດຖະກິດຂອງຊາດ ຊຶ່ງໃນຜ່ານມາສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານແລະໃນຂະນະດຽວກັນ ຍັງຍົກໃຫ້ເຫັນດ້ານພົ້ນເດັ່ນ, ຂໍ້ຄົງຄ້າງ-ຂໍ້ຫຍຸ້ງຍາກ ແລະ ບັນຫາທ້າທາຍໃນຜ່ານມາ ແລະ ໃນຕໍ່ໜ້າ; ຈາກນັ້ນ, ຄະນະຂອງທ່ານຜູ້ວ່າການ ທຫລ ຍັງໄດ້ໄປຢ້ຽມຢາມບັນດາໂຮງງານ ແລະ ສະຖານທີ່ປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນຢູ່ເຂດດັ່ງກ່າວ.






ໃນຕອນແລງຂອງວັນດັ່ງກ່າວ; ຢູ່ສຳນັກງານສາຂາ ທຫລ ພາກກາງແຂວງສະຫວັນນະເຂດໄດ້ຈັດໃຫ້ມີກອງປະຊຸມໂດຍໄດ້ຮັບຟັງການລາຍງານສະພາບການພົ້ນເດັ່ນ ແລະ ຂໍ້ຄົງຄ້າງພ້ອມທັງຄຳສະເໜີໃນຂອງຫົວໜ້າສາຂາ ທຫລ ແລະ ບັນດາສາຂາ/ໜ່ວຍບໍລິການທະນາຄານທຸລະກິດໃນຜ່ານມາຊຶ່ງທ່ານຜູ້ວ່າການ ທຫລ ຍັງໃຫ້ກຽດໂອ້ລົມ-ຊີ້ນຳວຽກງານແກ່ພະນັກງານທະນາຄານ ທຫລ ພາກກາງແຂວງສະຫວັນນະເຂດ ແລະ ບັນດາທະນາຄານທຸລະກິດທີ່ທຳທຸລະກຳການເງິນຢູ່ແຂວງສະຫວັນນະເຂດທີ່ໄດ້ດຳເນີນຢ່າງມີຜົນດີ ແລະ ຍັງຮຽກຮ້ອງໃຫ້ທຸກຄົນຈົ່ງເສີມຂະຫຍາຍຜົນງານທີ່ຕັ້ງໜ້າ; ແກ້ໄຂບັນຫາອ່ອນ, ຂໍ້ຄົງຄ້າງໃນຜ່ານມາ ໂດຍສະເພາະ ຕ້ອງມີຄວາມສາມັກຄີເປັນເອກະພາບ, ມີຄວາມຊື່ສັດ, ປະຢັດ, ເຮັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ, ແກ້ໄຂບັນຫາຕ່າງໆທີ່ຕິດພັນກັບສາຂາ/ໜ່ວຍບໍລິການຂອງຕົນໃຫ້ມີຫຼຸດລົງ, ມີຄຸນນະພາບແລະປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ